**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການກະຊວງ

ເລກທີ: 3143 - - - /ຫກ
ນະຄອນຫຼວງວຽງຈັນ, ວັນທີ: ໑໐ ຕຸລາ 2024

ໂຄງການເສີມສ້າງທັກສະທີ່ເປັນບູລິມະສິດ
ສຳລັບການເຕີບໂຕຂອງ ສປປ ລາວ
ສັນຍາເລກທີ : NCB C3.2.2-G1.1

# ຫນັງສືແຈ້ງເຊີນປະມູນ

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫ້ອງການຄຸ້ມຄອງໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດສຳລັບການເຕີບໂຕຂອງ ສປປ ລາວ, ໄດ້ຮັບອະນຸມັດງົບປະມານ ປະຈຳສົກປີ 2024 ເພື່ອດຳເນີນການ ປະມູນຈັດຊື້ ລົດຮັບໃຊ້ຫ້ອງການຄຸ້ມຄອງໂຄງການ ດ້ວຍການປະມູນແບບເປີດກວ້າງ.
2. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫ້ອງການຄຸ້ມຄອງໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດສຳລັບການເຕີບໂຕຂອງ ສປປ ລາວ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນແບບເປີດກວ້າງ ສຳລັບການຈັດຊື້ ລົດຮັບໃຊ້ຫ້ອງການຄຸ້ມຄອງໂຄງການ, ໄລຍະເວລາໃນການສົ່ງມອບ ຫລື ການບໍລິການ ແມ່ນ: ລົດ SUV ຈຳນວນ 2 ຄັນ[04 ເດືອນ], ລົດຕູ້ ຈຳນວນ 1 ຄັນ [12 ເດືອນ].
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນພາຍໃນຕາມທີ່ໄດ້ລະບຸໄວ້ໃນ ຄູ່ມືແນະນຳ**:** ຂອງທະນາຄານໂລກ ວ່າດ້ວຍ ຫລັກການການຈັດຊື້ຈັດຈ້າງສຳລັບປະເທດຜູ້ກູ້ຢືມ **Procurement Regulations for IPF Borrowers fifth edition September 2023 (https://thedocs.worldbank.org/en/doc/6c0602876d68949e80820507d90a14ed-0290012023/original/Procurement-Regulations-September-2023.pdf)** ແລະ ເປີດໃຫ້ຜູ້ປະມູນທຸກໆຄົນທີ່ມີຄວາມເໝາະສົມຕາມບົດແນະນຳວ່າດ້ວຍການຈັດຊື້-ຈັດຈ້າງ**.** ພ້ອມກັນນັ້ນ, ໃຫ້ເບິ່ງຫຍໍ້ໜ້າ 3.15, 3.18 ແລະ 3.19 ທີ່ກຳນົດໄວ້ໃນນະໂຍບາຍຂອງທະນາຄານໂລກວ່າດ້ວຍການມີຜົນປະໂຫຍດຊໍ້າຊ້ອນ**.**
4. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫ້ອງການຄຸ້ມຄອງໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດສຳລັບການເຕີບໂຕຂອງ ສປປ ລາວ ເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນຊອງປະມູນຈັດຊື້ລົດ ຮັບໃຊ້ຫ້ອງການຄຸ້ມຄອງໂຄງການ ໂດຍແບ່ງເປັນ 2 ພູດຄື: ພູດທີ 1: ລົດ SUV ຈຳນວນ 2 ຄັນ , ພູດທີ 2: ລົດຕູ້ ຈຳນວນ 1 ຄັນ.
5. ບໍລິສັດທີ່ມີຄວາມເໝາະສົມ ອາດໄດ້ຮັບຂໍ້ມູນຈາກ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫ້ອງການຄຸ້ມຄອງໂຄງການ, **ບ້ານ ໂພນສະຫວ່າງ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 91114568, 020 29939999, 020 22887666 Email: domesticemploymentdivision@gmail.com**
**cc: psgproject.proc@gmail.com; phonemalykhattiya@gmail.com** ແລະ ກວດກາເອກະສານປະມູນໃນເວລາໂມງການ.

6. ຊອງປະມູນຈະຕ້ອງສົ່ງຫາ **ຫ້ອງການຄຸ້ມຄອງໂຄງການ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຫ້ອງປະຊຸມຊັ້ນ 3) ບ້ານ ໂພນສະຫວ່າງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 91114568, 020 29939999, 020 22887666** ໃນວັນທີ ຫລື ກ່ອນ ***12 ພະຈິກ 2024, ເວລາ 14,00 ມ.*** ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ຊອງປະມູນທີ່ສົ່ງຊ້າ ຈະຖືກປະຕິເສດ. ການເປີດຊອງປະມູນຈະເປີດຕໍ່ໜ້າສາທາລະນະໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມຢູ່ສະຖານທີ່ໆກຳນົດໄວ້ຂ້າງລຸ່ມນີ້
7. ທຸກໆເອກະສານ ຈະຕ້ອງປະກອບການຄ້ຳປະກັນການປະມູນດ້ວຍກຽດ.

**ຫົວໜ້າຫ້ອງການ**

**(ຫົວໜ້າໂຄງການ)**

ບຸນຍອດ ຈັນທະວອນ